ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ 9393 /ຍທຂ
ນະຄອນຫຼວງວຽງຈັນ, ວັນທີ 13 ເມສາ 2023

# ຂໍ້ຕົກລົງ
# ວ່າດ້ວຍການອະນຸຍາດນ້ຳໜັກລວມສູງສຸດຂອງລົດບັນທຸກ

- ອີງຕາມ ກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ ສະບັບເລກທີ 24/ສພຊ, ລົງວັນທີ 24 ທັນວາ 2012;
- ອີງຕາມ ກົດໝາຍ ວ່າດ້ວຍການຈະລາຈອນທາງບົກ ສະບັບເລກທີ 23/ສພຊ, ລົງວັນທີ 12 ທັນວາ 2012;
- ອີງຕາມ ກົດໝາຍ ວ່າດ້ວຍທາງຫຼວງ ສະບັບເລກທີ 03/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 677/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມຂົວທາງ ສະບັບເລກທີ 17597/ກຂທ, ລົງວັນທີ 10 ພະຈິກ 2022.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບນ້ຳໜັກລວມສູງສຸດຂອງລົດບັນທຸກ ທີ່ສັນຈອນຕາມທາງຫຼວງ ເພື່ອໃຫ້ແທດເໝາະກັບຄວາມສາມາດຮັບນ້ຳໜັກຂອງທາງຫຼວງແຕ່ລະປະເພດ ໃນແຕ່ລະລະດູການ ແນໃສ່ປົກປັກຮັກສາເສັ້ນທາງໃຫ້ມີອາຍຸການນຳໃຊ້ຍາວນານ, ຫຼຸດຜ່ອນການໃຊ້ຈ່າຍງົບປະມານຂອງລັດໃນການ ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ ພ້ອມທັງຫຼຸດຜ່ອນການເກີດ ອຸປະຕິເຫດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ນ້ຳໜັກລວມສູງສຸດຂອງລົດບັນທຸກ**

ນ້ຳໜັກລວມສູງສຸດຂອງລົດບັນທຸກ ແມ່ນ ນ້ຳໜັກລົດເປົ່າ ບວກກັບນ້ຳໜັກທີ່ບັນທຸກ ທີ່ອະນຸຍາດໃຫ້ສັນຈອນຕາມທາງຫຼວງ ແຕ່ລະປະເພດ ໃນ ສປປ ລາວ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນການຂົນສົ່ງ, ບັນທຸກໜັກທີ່ສັນຕອນຕາມທາງຫຼວງແຕ່ລະປະເພດ ໃນ ສປປ ລາວ.

# ໝວດທີ 2
# ນ້ຳໜັກລວມສູງສຸດຂອງລົດບັນທຸກ

**ມາດຕາ 4 ປະເພດຂອງລົດບັນທຸກ**

ລົດບັນທຸກທີ່ອະນຸຍາດ ມີ 03 ປະເພດ ດັ່ງນີ້:

1. ລົດບັນທຸກດ່ຽວ;
2. ລົດບັນທຸກເຄິ່ງຫາງລາກ;
3. ຫາງລາກ.

**ມາດຕາ 5 ນ້ຳໜັກລວມສູງສຸດຂອງລົດບັນທຸກດ່ຽວ**

ລົດບັນທຸກ ແມ່ນລົດບັນທຸກທີ່ບໍ່ສາມາດແຍກຈາກກັນໄດ້ ມີ 08 ຊະນິດ ຊຶ່ງນ້ຳໜັກລວມສູງສຸດຂອງລົດບັນທຸກດ່ຽວ ທີ່ອະນຸຍາດ ມີລາຍລະອຽດ ດັ່ງນີ້:

| ລ/ດ | ປະເພດລົດ | ຮູບສະແດງປະເພດລົດ | ນ້ຳໜັກລວມສູງສຸດ ທີ່ອະນຸຍາດ (ກິໂລກຣາມ) | | |
|---|---|---|---|---|---|
| ລົດບັນທຸກດ່ຽວ **RIGID TRUCK** | | | 8,2 ໂຕນ | 9,1 ໂຕນ | 11 ໂຕນ |
| 1 | 2 ເພົາ 4 ຕີນ |  | 8.500 | 9.500 | 12.000 |
| 2 | 2 ເພົາ 6 ຕີນ |  | 11.100 | 13.100 | 15.000 |
| 3 | 3 ເພົາ 6 ຕີນ |  | 15.300 | 16.800 | 18.000 |
| 4 | 3 ເພົາ 10 ຕີນ |  | 21.000 | 22.800 | 25.000 |
| 5 | 3 ເພົາ 6 ຕີນ |  | 10.500 | 12.000 | 14.100 |

| | | | | | |
|---|---|---|---|---|---|
| 6 | 3 ເພົາ 8 ຕີນ |  | 13.100 | 14.900 | 15.800 |
| 7 | 4 ເພົາ 8 ຕີນ |  | 18.800 | 20.000 | 22.500 |
| 8 | 4 ເພົາ 12 ຕີນ |  | 23.000 | 27.000 | 30.000 |

**ມາດຕາ 6  ນ້ຳໜັກລວມສູງສຸດຂອງລົດບັນທຸກເຄິ່ງຫາງລາກ**

ລົດບັນທຸກເຄິ່ງຫາງລາກ ແມ່ນລົດບັນທຸກທີ່ມີສ່ວນຫົວເປັນແຮງຂັບເຄື່ອນ ແລະ ມີຫາງລາກໃນການບັນທຸກ ມີ 05 ຊະນິດ ຊຶ່ງນ້ຳໜັກລວມສູງສຸດຂອງລົດບັນທຸກເຄິ່ງຫາງລາກ ທີ່ອະນຸຍາດ ມີລາຍລະອຽດ ດັ່ງນີ້:

| ລ/ດ | ປະເພດລົດ | ຮູບສະແດງປະເພດລົດ | ນ້ຳໜັກລວມສູງສຸດ ທີ່ອະນຸຍາດ (ກິໂລກຣາມ) | | |
|---|---|---|---|---|---|
| ລົດບັນທຸກເຄິ່ງຫາງລາກ **SEMI-TRAILER** | | | 8,2 ໂຕນ | 9,1 ໂຕນ | 11 ໂຕນ |
| 1 | 3 ເພົາ 10 ຕີນ |  | 19,300 | 22.800 | 25.000 |
| 2 | 4 ເພົາ 14 ຕີນ |  | 27.500 | 31.900 | 35.000 |
| 3 | 4 ເພົາ 14 ຕີນ |  | 27.500 | 30.100 | 35.000 |

| | | | | | |
|---|---|---|---|---|---|
| 4 | 5 ເພົາ 18 ຕີນ |  | 37.400 | 41.000 | 45.000 |
| 5 | 6 ເພົາ 22 ຕີນ |  | 41.400 | 43.200 | 50.500 |

**ມາດຕາ 7 ນ້ຳໜັກລວມສູງສຸດຂອງຫາງລາກ**

ຫາງລາກ ແມ່ນລົດບັນທຸກທີ່ບໍ່ສາມາດຂັບເຄື່ອນດ້ວຍຕົວເອງ ຕ້ອງໄດ້ໃຊ້ຫົວລາກໃນການຂັບເຄື່ອນ ມີ 05 ຊະນິດ ຊຶ່ງນ້ຳໜັກລວມສູງສຸດຂອງຫາງລາກ ທີ່ອະນຸຍາດ ມີລາຍລະອຽດ ດັ່ງນີ້:

| ລ/ດ | ປະເພດລົດ | ຮູບສະແດງປະເພດລົດ | ນ້ຳໜັກລວມສູງສຸດ ທີ່ອະນຸຍາດ (ກິໂລກຣາມ) | | |
|---|---|---|---|---|---|
| ຫາງລາກ **TRAILER** | | | 8,2 ໂຕນ | 9,2 ໂຕນ | 11 ໂຕນ |
| 1 | 2 ເພົາ 4 ຕີນ |  | 12.200 | 13.600 | 14.000 |
| 2 | 2 ເພົາ 6 ຕີນ |  | 15.000 | 15.900 | 18.000 |
| 3 | 2 ເພົາ 8 ຕີນ |  | 16.400 | 18.200 | 22.000 |
| 4 | 3 ເພົາ 12 ຕີນ |  | 24.600 | 25.500 | 31.000 |
| 5 | 4 ເພົາ 16 ຕີນ |  | 32.800 | 36.400 | 40.000 |

**ມາດຕາ 8 ການຫຼຸດນ້ຳໜັກລວມສູງສຸດ ຕາມບາງສະພາບ ເຕັກນິກ ຂອງລົດບັນທຸກ**

ລົດບັນທຸກ ທີ່ມີເພົາເປັນປະເພດຕີນຄູ່, ຖ້າຫາກວ່າ ໄດ້ປົດຕີນຄູ່ອອກເສັ້ນໜຶ່ງ ຫຼື ເສັ້ນໃດໜຶ່ງ ແຕກ, ຮົ່ວ, ຕ້ອງຫຼຸດນ້ຳໜັກເພົາ ແລະ ນ້ຳໜັກລວມສູງສຸດລົງ ໂດຍໃຫ້ຄິດໄລ່ນ້ຳໜັກ ເປັນປະເພດຕີນດ່ຽວ.

**ມາດຕາ 9 ນ້ຳໜັກລວມສູງສຸດຂອງລົດບັນທຸກ ຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.**

ນ້ຳໜັກເພົາ ແລະ ນ້ຳໜັກລວມສູງສຸດຂອງລົດບັນທຸກ ຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທີ່ສັນຈອນຕາມທາງຫຼວງ ແມ່ນໃຫ້ປະຕິບັດຕາມລະບຽບການທີ່ໄດ້ກຳນົດໄວ້ໃນ ມາດຕາ 5, 6 ແລະ 7 ຂອງຂໍ້ຕົກລົງສະບັບນີ້, ຍົກເວັ້ນ ກໍລະນີສຸກເສີນ.

**ມາດຕາ 10 ການຂົນສົ່ງພິເສດ**

ການຂົນສົ່ງພິເສດ ທີ່ ມີນ້ຳໜັກຫຼາຍ ແລະ ມີຂະໜາດໃຫຍ່, ກວ້າງ, ສູງ, ຍາວ ເກີນທີ່ໄດ້ກຳນົດໄວ້ໃນ ມາດຕາ 14 ຊຶ່ງບໍ່ສາມາດແຍກເປັນຊິ້ນສ່ວນອອກຈາກກັນໄດ້ ຕ້ອງໄດ້ຮັບອະນຸຍາດຈາກ ກະຊວງໂຍທາທິການ ແລະ ຂົນສົ່ງ ເສຍກ່ອນ.

**ມາດຕາ 11 ນ້ຳໜັກລວມສູງສຸດຂອງທາງຫຼວງແຫ່ງຊາດທີ່ຮອງຮັບ 11ໂຕນ/ເພົາ**

ທາງຫຼວງແຫ່ງຊາດທີ່ສາມາດຮອງຮັບນ້ຳໜັກລວມສູງສຸດ 11ໂຕນ/ເພົາ ມີດັ່ງນີ້:

ເສັ້ນທາງຫຼວງແຫ່ງຊາດເລກ 9 (ຂົວມິດຕະພາບ II ສະຫວັນນະເຂດ-ແດນສະຫວັນ), ເສັ້ນທາງຫຼວງ ແຫ່ງຊາດເລກ 3 (ຂົວມິດຕະພາບ 4 ຫ້ວຍຊາຍ - ບໍ່ແຕນ), ເສັ້ນທາງຫຼວງແຫ່ງຊາດເລກ 4 (ຂົວມິດຕະພາບ 2 ແກ່ນທ້າວ ໄຊຍະບູລີ - ສາມແຍກຊຽງເງິນ).

## ໝວດທີ 3
## ໄລຍະເວລາບັນທຸກນ້ຳໜັກລວມສູງສຸດຕາມລະດູ

**ມາດຕາ 12 ນ້ຳໜັກລວມສູງສຸດ ຂອງລົດບັນທຸກໃນຊ່ວງລະດູແລ້ງ**

ນ້ຳໜັກລວມສູງສຸດຂອງລົດບັນທຸກທີ່ກຳນົດແມ່ນອະນຸຍາດໃຫ້ສັນຈອນຕາມຄວາມອາດສາມາດຮັບນ້ຳໜັກຂອງທາງຫຼວງແຕ່ລະປະເພດຊ່ວງລະດູແລ້ງ ນັບແຕ່ວັນທີ 01 ພະຈິກ ຫາ ວັນທີ 31 ພຶດສະພາ.

**ມາດຕາ 13 ນ້ຳໜັກລວມສູງສຸດ ຂອງລົດບັນທຸກໃນຊ່ວງລະດູຝົນ**

ນ້ຳໜັກລວມສູງສຸດ ຂອງລົດບັນທຸກ ທີ່ອະນຸຍາດໃຫ້ສັນຈອນຕາມທາງ ປູດິນແດງ ແລະ ປູແຮ່ ໃຫ້ຫຼຸດນ້ຳໜັກລົງ ຊາວສ່ວນຮ້ອຍ (20%) ນັບແຕ່ວັນທີ 01 ມິຖຸນາ ຫາ ວັນທີ 31 ຕຸລາ.

## ໝວດທີ 4
## ຂະໜາດ ແລະ ການປະຕິບັດລະບຽບຈະລາຈອນຂອງຜູ້ຂັບຂີ່ ລົດບັນທຸກ

**ມາດຕາ 14 ຂະໜາດລົດບັນທຸກຄວາມກວ້າງ, ຄວາມສູງ ແລະ ຄວາມຍາວ ຂອງລົດບັນທຸກ**

ທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ ຕາມທາງຫຼວງແຕ່ລະປະເພດ ມີຂະໜາດ ດັ່ງນີ້:

1. ຄວາມກວ້າງ ບໍ່ເກີນ 2,50 ແມັດ;
2. ຄວາມສູງ ບໍ່ເກີນ 4,50 ແມັດ;
3. ຄວາມຍາວຂອງລົດບັນທຸກດ່ຽວ ບໍ່ເກີນ 12,20 ແມັດ;
4. ຄວາມຍາວຂອງລົດບັນທຸກເຄິ່ງຫາງລາກ ບໍ່ເກີນ 21,03 ແມັດ;
5. ຄວາມຍາວຂອງຫາງລາກ ບໍ່ເກີນ 19,00 ແມັດ.

**ມາດຕາ 15 ການປະຕິບັດລະບຽບຈະລາຈອນຂອງຜູ້ຂັບຂີ່ລົດບັນທຸກ**

ຜູ້ຂັບຂີ່ລົດບັນທຸກ ທີ່ສັນຈອນຕາມທາງຫຼວງແຕ່ລະປະເພດ ຕ້ອງປະຕິບັດຕາມ ດຳລັດ ວ່າດ້ວຍກົດຈະລາຈອນທາງບົກ ສະບັບເລກທີ 615/ລບ, ລົງວັນທີ 09 ທັນວາ 2020 (ອະທິບາຍ) ຢ່າງເຂັ້ມງວດ ເປັນຕົ້ນ ປ້າຍກຳນົດນໍ້າໜັກ (ຂົວ ແລະ ທາງ) ແລະ ປ້າຍສະຖານີຕິດຊັ່ງນໍ້າໜັກ.

## ໝວດທີ 5
## ການກວດກາຊັ່ງນໍ້າໜັກ ແລະ ປັບໃໝລົດບັນທຸກນໍ້າໜັກເກີນ

**ມາດຕາ 16 ການກວດກາຊັ່ງນໍ້າໜັກ**

ລົດບັນທຸກນໍ້າໜັກ ທີ່ສັນຈອນຕາມທາງຫຼວງແຕ່ລະປະເພດ ຕ້ອງໄດ້ຜ່ານການກວດກາຊັ່ງນໍ້າໜັກບັນທຸກ ຢູ່ ສະຖານີຕິດຊັ່ງນໍ້າໜັກ ຫຼື ຜ່ານການກວດກາຈາກໜ່ວຍງານກວດການໍ້າໜັກສະເພາະກິດ ທີ່ປະຈຳຢູ່ຕາມທາງຫຼວງແຕ່ລະປະເພດ.

**ມາດຕາ 17 ການອອກໃບຢັ້ງຢືນກວດກາການຊັ່ງນໍ້າໜັກ**

ພາຍຫຼັງກວດກາການຊັ່ງນໍ້າໜັກ ພະນັກງານປະຈຳສະຖານີຕິດຊັ່ງນໍ້າໜັກ ຫຼື ໜ່ວຍງານກວດການໍ້າໜັກສະເພາະກິດ ຈະອອກໃບຢັ້ງຢືນໃຫ້ລົດບັນທຸກທີ່ຜ່ານການກວດກາ ເພື່ອເປັນຫຼັກຖານ.

**ມາດຕາ 18 ໜ່ວຍງານກວດການໍ້າໜັກສະເພາະກິດ**

ໜ່ວຍງານກວດການໍ້າໜັກສະເພາະກິດ ແມ່ນໜ່ວຍງານກວດກາລົດບັນທຸກຕາມເສັ້ນທາງຫຼວງ ທີ່ມີເປົ້າໝາຍ ແລະ ການສຸ່ມກວດ ເມື່ອເຫັນວ່າມີການເຄື່ອນໄຫວຂົນສົ່ງສິນຄ້າທີ່ມີນໍ້າໜັກເກີນກວ່າການອະນຸຍາດນໍ້າໜັກລວມສູງສຸດ.

**ມາດຕາ 19 ການປັບໃໝລົດບັນທຸກນໍ້າໜັກເກີນ**

ການປັບໃໝລົດບັນທຸກນໍ້າໜັກເກີນ ພະນັກງານປະຈຳສະຖານີຊັ່ງຊັ່ງນໍ້າໜັກ ຫຼື ໜ່ວຍກວດການໍ້າໜັກສະເພາະກິດ ເປັນຜູ້ຄິດໄລ່ຕາມອັດຕາການປັບໃໝຕາມລະບຽບການ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ.

ເຈົ້າຂອງລົດບັນທຸກ ຕ້ອງຮັບຜິດຊອບໃນການຄ່ຽນຖ່າຍນໍ້າໜັກເກີນລົງຈາກລົດດັ່ງກ່າວ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 20 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ແອບອ້າງເປັນພະນັກງານຂອງໜ່ວຍງານປະຈຳສະຖານີກວດຊັ່ງນໍ້າໜັກລົດບັນທຸກ;
2. ຂັບຂີ່ລົດບັນທຸກນໍ້າໜັກເກີນກຳນົດ ເຂົ້າໃນທາງຫຼວງແຕ່ລະປະເພດ;
3. ຮັບຈ້າງຂົນສົ່ງນໍ້າໜັກເກີນກຳນົດ;
4. ເປັນສື່ກາງໃນການໃຫ້ ແລະ ຮັບສິນບົນ;
5. ຂັດຂວາງ, ບໍ່ອຳນວຍຄວາມສະດວກ, ບໍ່ໃຫ້ຄວາມຮ່ວມມື ໃນການກວດການໍ້າໜັກລວມສູງສຸດຂອງໜ່ວຍງານປະຈຳສະຖານີຕິດຊັ່ງນໍ້າໜັກລົດບັນທຸກ;
6. ມີພຶດຕິກຳອື່ນ ທີ່ລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 21 ຂໍ້ຫ້າມສຳລັບຜູ້ຂັບຂີ່ລົດບັນທຸກ**

ຫ້າມຜູ້ຂັບຂີ່ລົດບັນທຸກ ມີພຶດຕິກຳ ດັ່ງນີ້:

1. ຂັບຂີ່ລົດບັນທຸກໜັກເກີນ ເຂົ້າທາງຫຼວງແຕ່ລະປະເພດ ໂດຍບໍ່ໄດ້ຜ່ານຈຸດກວດກາຊັ່ງນໍ້າໜັກລວມສູງສຸດຂອງລົດບັນທຸກ ຫຼື ບໍ່ມີໃບຢັ້ງຢືນການກວດການໍ້າໜັກລວມສູງສຸດຂອງລົດບັນທຸກ;

2. ບໍ່ເຂົ້າແຈ້ງກວດການໍ້າໜັກລວມສູງສຸດຂອງລົດບັນທຸກ;

3. ບັນທຸກນໍ້າໜັກເກີນມາດຕະຖານເຕັກນິກທີ່ກຳນົດ;

4. ໃຫ້ສິນບົນແກ່ພະນັກງານໜ່ວຍງານປະຈຳສະຖານີຕິດຊັ່ງນໍ້າໜັກລັດບັນທຸກ;

5. ມີພຶດຕິກຳອື່ນ ທີ່ລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 22 ຂໍ້ຫ້າມສຳລັບຜູ້ປະກອບການຂົນສົ່ງ**

ຫ້າມຜູ້ປະກອບການຂົນສົ່ງ ມີພຶດຕິກຳ ດັ່ງນີ້:

1. ໃຫ້ເຊົ່າ, ໂອນທະບຽນວິສາຫະກິດຂອງຕົນໃຫ້ແກ່ຜູ້ອື່ນ ຫຼື ນຳໃຊ້ທະບຽນວິສາຫະກິດຂອງຜູ້ອື່ນ;

2. ດຳເນີນກິດຈະການບໍ່ຖືກຕ້ອງຕາມປະເພດທີ່ໄດ້ຮັບອະນຸຍາດ, ບໍ່ມີໃບອະນຸຍາດ ຫຼື ໃບອະນຸຍາດໝົດອາຍຸ;

3. ປະກອບເອກະສານບໍ່ຖືກຕ້ອງ, ສົມຮູ້ຮ່ວມຄິດ ຫຼື ໃຫ້ສິນບົນແກ່ ເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ ພະນັກງານໜ່ວຍງານປະຈຳສະຖານີຕິດຊັ່ງນໍ້າໜັກລົດບັນທຸກ ເພື່ອອຳນວຍຜົນປະໂຫຍດໃຫ້ການດຳເນີນກິດຈະການຂົນສົ່ງຂອງຕົນ;

4. ບໍ່ໃຫ້ການຮ່ວມມື, ປິດບັງ, ປອມແປງ, ບິດເບືອນຂໍ້ມູນກ່ຽວກັບ ບໍລິມາດການຂົນສົ່ງຕໍ່ການກວດກາຂອງເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ ລວມທັງພະນັກງານໜ່ວຍງານປະຈຳສະຖານີຕິດຊັ່ງນໍ້າໜັກລົດບັນທຸກ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 23 ຂໍ້ຫ້າມສຳລັບພະນັກງານໜ່ວຍງານປະຈຳສະຖານີຕິດຊັ່ງນໍ້າໜັກລົດບັນທຸກ**

ຫ້າມພະນັກງານໜ່ວຍງານປະຈຳສະຖານີຕິດຊັ່ງນໍ້າໜັກລົດບັນທຸກ ມີພຶດຕິກຳ ດັ່ງນີ້:

1. ອອກໃບຢັ້ງຢືນກວດການໍ້າໜັກ ໂດຍບໍ່ຖືກຕ້ອງຕາມມາດຕະຖານ ຫຼື ບໍ່ໄດ້ລົງກວດກາຕົວຈິງ;

2. ສົມຮູ້ຮ່ວມຄິດ, ທວງເອົາ, ຂໍເອົາ, ຮັບ ສິນບົນ, ໃຊ້ອຳນາດເກີນຂອບເຂດ, ກົດໜ່ວງ, ຖ່ວງດຶງ, ປອມແປງເອກະສານກ່ຽວກັບນໍ້າໜັກລວມຂອງລົດບັນທຸກ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດແກ່ຕົນ, ຄອບຄົວ ແລະ ພັກພວກ;

3. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບທາງລັດຖະການ;

4. ມີພຶດຕິກຳອື່ນ ທີ່ລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ການຄຸ້ມຄອງ ແລະ ກວດກາວຽກງານນໍ້າໜັກລວມສູງສຸດຂອງລົດບັນທຸກ

**ມາດຕາ 24 ອົງການຄຸ້ມຄອງວຽກງານນໍ້າໜັກລວມສູງສຸດຂອງລົດບັນທຸກ**

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄຸ້ມຄອງວຽກງານນໍ້າໜັກລວມສູງສຸດຂອງລົດບັນທຸກຢ່າງລວມສູນ ແລະ ເປັນ ເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກົມຂົວທາງເປັນ ຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງວຽກງານດັ່ງກ່າວຕາມຄວາມຮັບຜິດຊອບຂອງຕົນ.

ອົງການຄຸ້ມຄອງກວດການໍ້າໜັກ ປະກອບດ້ວຍ:

1. ກົມຂົວທາງ;

2. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງວຽງຈັນ;

3. ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງກົມຂົວທາງ**

ກົມຂົວທາງ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການ ຄຸ້ມຄອງ, ຕິດຕາມ ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດວຽກຄຸ້ມຄອງນໍ້າໜັກລົດບັນທຸກ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການ

2. ຄົ້ນຄວ້າ, ສ້າງ, ປັບປຸງກົນໄກ ແລະ ລະບຽບການ ສຳລັບວຽກງານຄຸ້ມຄອງນໍ້າໜັກ ໂດຍການຫັນເປັນສະໄໝເທື່ອລະກ້າວ;

3. ສ້າງ, ປັບປຸງ ພາລະບົດບາດ ຂອງພະນັກງານປະຈຳສະຖານີຕິດຊັ່ງນໍ້າໜັກ ໃຫ້ມີຄວາມ ໂປ່ງໃສ, ຍຸຕິທຳ ສາມາດກວດສອບ-ກວດກາໄດ້, ສ້າງແຜນຍົກລະດັບຂີດຄວາມສາມາດທາງດ້ານເຕັກນິກ ການ ນຳໃຊ້, ບູລະນະຮັກສາ ແລະ ສ້ອມແປງ ລະບົບຊິງຊັ່ງນໍ້າໜັກ ໃນແຕ່ລະໄລຍະ;

4. ຂຶ້ນແຜນງົບປະມານ ສຳລັບ ຄຸ້ມຄອງ, ບໍລິຫານ, ກໍ່ສ້າງ ແລະ ສ້ອມແປງ ສະຖານີຕິດຊັ່ງນໍ້າໜັກ ໃນຂອບເຂດທົ່ວປະເທດ;

5. ຄຸ້ມຄອງໂດຍກົງ ສະຖານີຕິດຊັ່ງນໍ້າໜັກ ຕາມທາງຫຼວງແຫ່ງຊາດ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງວຽງຈັນ**

ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ຈັດຕັ້ງໜ່ວຍກວດການໍ້າໜັກສະເພາະກິດ ໂດຍນຳໃຊ້ຊິງເຄື່ອນທີ່ ຕາມການຕົກລົງເຫັນດີ ຂອງກົມຂົວທາງ;

2. ປະກອບພະນັກງານຜູ້ທີ່ມີ ຄຸນສົມບັດ, ຄວາມຮູ້ ແລະ ຄວາມສາມາດ ເຂົ້າໃນໜ່ວຍກວດກາສະເພາະກິດ ແລະ ໜ່ວຍງານສະຖານີຕິດຊັ່ງນໍ້າໜັກ;

3. ຄຸ້ມຄອງວັດຖຸອຸປະກອນ ທີ່ນຳໃຊ້ກວດກາສະເພາະກິດ ໃຫ້ຢູ່ໃນສະພາບໃຊ້ການໄດ້ ແລະ ບໍ່ໃຫ້ຕົກເຮ່ຍເສຍຫາຍ;

4. ປະຕິບັດການປັບໃໝ ແລະ ຄຸ້ມຄອງເງິນຄ່າປັບໃໝ;

5. ເກັບກຳສະຖິຕິ, ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຄຸ້ມຄອງນໍ້າໜັກໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ອົງການ ແລະ ປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

6. ຈັດຕັ້ງ ເຜີຍແຜ່ ແລະ ສຶກສາອົບຮົມ ຜູ້ປະກອບການຂົນສົ່ງ ໃຫ້ປະຕິບັດຕາມ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງລົດບັນທຸກ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

**ມາດຕາ 27 ສິດ ແລະ ໜ້າທີ່ ຂອງຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ**

ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ປະກອບພະນັກງານຜູ້ທີ່ມີ ຄຸນສົມບັດ, ຄວາມຮູ້ ແລະ ຄວາມສາມາດ ເຂົ້າໃນໜ່ວຍກວດກາສະເພາະກິດ ແລະ ໜ່ວຍງານສະຖານີຕິດຊັ່ງນໍ້າໜັກ;

2. ຄຸ້ມຄອງວັດຖຸອຸປະກອນ ທີ່ນຳໃຊ້ກວດກາສະເພາະກິດ ໃຫ້ຢູ່ໃນສະພາບໃຊ້ການໄດ້ ແລະ ບໍ່ໃຫ້ຕົກເຮ່ຍເສຍຫາຍ;

3. ເກັບກຳສະຖິຕິ, ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຄຸ້ມຄອງນໍ້າໜັກ ໃຫ້ອົງການປົກຄອງຂັ້ນແຂວງ ແລະ ພະແນກໂຍທາທິການ ແລະ ຂົນສົ່ງ ຢ່າງເປັນປົກກະຕິ;

4. ຈັດຕັ້ງ ເຜີຍແຜ່ ແລະ ສຶກສາອົບຮົມ ຜູ້ປະກອບການຂົນສົ່ງ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງລົດບັນທຸກ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

**ມາດຕາ 28 ເນື້ອໃນກວດກາ**

ການກວດກາວຽກງານນໍ້າໜັກລວມສູງສຸດຂອງລົດບັນທຸກ ມີເນື້ອໃນ ຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດນະໂຍບາຍ, ພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຮັບຜິດຊອບຂອງໜ່ວຍງານປະຈຳສະຖານີຊັ່ງນໍ້າໜັກລົດບັນທຸກ;

2. ມາດຕະຖານເຕັກນິກ ການກວດການໍ້າໜັກລວມສູງສຸດຂອງລົດບັນທຸກ;

3. ຜົນກະທົບຕໍ່ສະພາບທາງຫຼວງແຕ່ລະປະເພດ ເນື່ອງຈາກລົດບັນທຸກນໍ້າໜັກ.

**ມາດຕາ 29 ຮູບການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຢ່າງເປັນປົກກະຕິ ຊຶ່ງແມ່ນການກວດກາ ທີ່ດໍາເນີນໄປຕາມແຜນການຢ່າງເປັນປະຈໍາ ແລະ ມີການກໍານົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາໂດຍຮີບດ່ວນ, ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການດໍາເນີນການກວດກາ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 30 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ເຂົ້າຮ່ວມໃນການຄຸ້ມຄອງນໍ້າໝັກລົດບັນທຸກຢ່າງມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ແລະ ໄດ້ຮັບການປະຕິບັດນະໂຍບາຍ ຕາມຄວາມເໝາະສົມ.

**ມາດຕາ 31 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກມາດຕະການ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ໂຈະ, ຖອນໃບ ອານຸຍາດກ່ຽວກັບການຂົນສົ່ງ, ຢຶດ ຫຼື ຮິບຍານພາຫະນະທີ່ໃຊ້ໃນການກະທໍາຜິດ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາຕາມກໍລະນີ ເບົາ ຫຼື ໜັກ.

ເຈົ້າໜ້າທີ່ກວດການໍ້າໝັກ ທີ່ສົມຮູ້ຮ່ວມຄິດໃນການກະທໍາຜິດ ຈະຖືກ ສຶກສາອົບຮົມ, ລົງວິໄນຕາມລະບຽບ ລັດຖະກອນ ແລະ ຖືກດໍາເນີນຄະດີ ຕາມກົດໝາຍ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 32 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມຂົວທາງ ເປັນເຈົ້າການໃນການຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

ຫ້ອງການ, ບັນດາກົມ, ສະຖາບັນ, ກອງ, ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ, ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ, ໜ່ວຍງານປະຈໍາສະຖານີຕິດຊັ່ງນໍ້າໝັກລົດບັນທຸກ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 33 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ.

ລັດຖະມົນຕີ

ກະຊວງໂຍທາທິການ ແລະ ຂົນສົ່ງ

ລັດຖະມົນຕີ

ງາມປະສົງ ເມືອງມະນີ